BMM

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ດ່ານສາກົນຂົວມິດຕະພາບ 1

ເລກທີ 006 / ດຂມ1

ວັນທີ 20 OCT 2014

# ແຈ້ງການ

ເຖິງ : ບັນດາ ບໍລິສັດ ຂົນສົ່ງສິນຄ້າຜ່ານແດນ ທີ່ເຂົ້າ-ອອກຜ່ານດ່ານສາກົນຂົວມິດຕະພາບ 1

ເລື່ອງ : ການເກັບຄ່າຄຸ້ມຄອງ ແລະ ບໍລິການ ລົດບັນທຸກເຂົ້າລານຈອດລົດຂາເຂົ້າເມືອງ ຢູ່ດ່ານສາກົນຂົວມິດຕະພາບ 1

ອີງຕາມ ຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 1190 / ຈນວ, ລົງວັນທີ 13 ທັນວາ 2011 ກ່ຽວກັບການຮັບຮອງເອົາແຜນພັດທະນາດ່ານສາກົນຂົວມິດຕະພາບ 1

ອີງຕາມ ແຈ້ງການຂອງຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ ເລກທີ 2082 / ຫປນ/ວຈ, ລົງວັນທີ 15 ຕຸລາ 2014 ເຫັນດີຮັບຮອງເອົາລາຄາຄ່າລົດບັນທຸກເຂົ້າລານຈອດລົດບັນທຸກຂາເຂົ້າເມືອງຢູ່ ດ່ານສາກົນຂົວມິດຕະພາບ 1

ດ່ານສາກົນຂົວມິດຕະພາບ 1 ຂໍແຈ້ງການມາຍັງບຸກຄົນ, ນິຕິບຸກຄົນ, ບໍລິສັດ ຂົນສົ່ງສິນຄ້າ, ຜູ້ປະກອບການຂົນສົ່ງ ທີ່ເຂົ້າ-ອອກ ຜ່ານດ່ານສາກົນຂົວມິດຕະພາບ 1 ຊາບວ່າ :

1; ດ່ານສາກົນຂົວມິດຕະພາບ 1 ຈະໄດ້ຈັດຕັ້ງການເກັບເງິນຄ່າຄຸ້ມຄອງ ແລະ ບໍລິການລານຈອດລົດ ບັນທຸກຂາເຂົ້າເມືອງ ຢູ່ດ່ານສາກົນຂົວມິດຕະພາບ 1 ເຊິ່ງມີລາຍລະອຽດດັ່ງນີ້ :

| ລຳດັບ | ປະເພດລົດ | ລາຄາຈອດປົກກະຕິ/ຄັນ | ລາຄາຈອດຄ້າງຄືນ/ຄັນ |
|---|---|---|---|
| 1 | ລົດກະບະທົ່ວໄປ | 20,000 ກີບ | 30,000 ກີບ |
| 2 | ລົດບັນທຸກ 4 ລໍ້ | 50,000 ກີບ | 75,000 ກີບ |
| 3 | ລົດບັນທຸກ 6 ລໍ້ - 10ລໍ້ | 60,000 ກີບ | 90,000 ກີບ |
| 4 | ລົດບັນທຸກເກີນ 10 ລໍ້ | 130,000 ກີບ | 195,000 ກີບ |

2; ເລີ່ມຈັດຕັ້ງປະຕິບັດນັບແຕ່ວັນທີ 01 ພະຈິກ 2014 ເປັນຕົ້ນໄປ

*ດັ່ງນັ້ນ ຈຶ່ງໄດ້ອອກແຈ້ງການສະບັບນີ້ ມາຍັງບັນດາບໍລິສັດຂົນສົ່ງທຸກພາກສ່ວນເພື່ອຮັບຮູ້ ແລະ ໃຫ້ການຮ່ວມມືຕາມນີ້ດ້ວຍ.*

ຫົວໜ້າດ່ານສາກົນຂົວມິດຕະພາບ 1.

ສົມບູນ ສຸວັນນະຈູມຄຳ